# ການມີສ່ວນຮ່ວມຂອງຍິງຊາຍ ຕໍ່ກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ




ສຳລັບການພັດທະນາຄວາມກ້າວໜ້າຂອງແມ່ຍິງ ຫຼື ວຽກງານບົດບາດຍິງ-ຊາຍ ຖືເປັນບຸລິມະສິດໜຶ່ງທີ່ສຳຄັນ ໃນການປະຕິບັດແຜນງານພັດທະນາກະສິກຳ ແລະ ປ່າໄມ້, ໂດຍການເພີ່ມທະວີ, ສະໜັບສະໜູນ ແລະ ສ້າງໂອກາດ ເອື້ອອຳນວຍ ໃຫ້ແກ່ພະນັກງານ ແລະ ຊາວກະສິກອນ ເພດຍິງມີສ່ວນຮ່ວມ ໃນການຕັດສິນບັນຫາ, ໃຫ້ພະນັກງານເພດຍິງມີສ່ວນຮ່ວມໃນການຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ເຂົ້າຮ່ວມສ້າງຂີດຄວາມສາມາດ, ຍົກລະດັບຄວາມຮູ້ຄວາມສາມາດ, ແລກປ່ຽນບົດຮຽນເຕັກນິກວິຊາການໃໝ່ ແລະ ໃຫ້ຊາວກະສິກອນເພດຍິງ, ຄອບຄົວທຸກຍາກ ບັນດາເຜົ່າໃນເຂດຊົນນະບົດ ຫ່າງໄກສອກຫຼີກ ໄດ້ເຂົ້າຮ່ວມໃນການຮຽນຮູ້ດ້ານເຕັກນິກ ການຜະລິດໃໝ່, ການເຂົ້າເຖິງຂໍ້ມູນຂ່າວສານ, ກົນໄກກອງທຶນ, ສິນເຊື່ອ, ການເງິນ, ການຕະຫຼາດ ແລະ ອື່ນໆທີ່ເໝາະສົມ.

**(ຍຸດທະສາດພັດທະນາກະສິກຳຮອດປີ 2025 ແລະ ວິໄສທັດຮອດປີ 2030, ຂໍ້ 3.4.1, 11 ນ້ອຍ)**

**ການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານຄວາມສະເໝີພາບຍິງ-ຊາຍ ມີດັ່ງນີ້:**

1. ການປູກຈິດສຳນຶກກ່ຽວກັບຄວາມສະເໝີພາບຍິງ-ຊາຍ;
2. ການບໍ່ໃຫ້ມີການຈຳແນກຄວາມສະເໝີພາບຍິງ-ຊາຍ;
3. ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ;
4. ການຮັບປະກັນຄວາມສະເໝີພາບຍິງ-ຊາຍ;
5. ການນຳໃຊ້ສະຖິຕິແຍກເພດຍິງ-ຊາຍ.

**(ກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ, ເລກທີ 77/ສພຊ, ລົງວັນທີ 28 ພະຈິກ 2019, ມາດຕາ 20)**

ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ, ປະສານສົມທົບ ສະຫະພັນແມ່ຍິງຂັ້ນເມືອງ ເພື່ອເປີດກອງປະຊຸມ ປະຊາສຳພັນບົດບາດຍິງ-ຊາຍ ເຊິ່ງມີຜູ້ເຂົ້າຮ່ວມຈາກອົງການປົກຄອງບ້ານ, ສະຫະພັນແມ່ຍິງບ້ານ, ແມ່ຍິງແຕ່ລະຄອບຄົວ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ ໂດຍຍົກໃຫ້ເຫັນບາງມາດຕາຂອງລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເປັນຕົ້ນການມີຊື່ໃນໃບຕາດິນເຊັ່ນ ຊັບເດີມຂອງເມຍກໍ່ໃຫ້ອອກຊື່ຂອງເມຍ, ຊັບເດີມຂອງຜົວກໍ່ໃຫ້ອອກຊື່ຂອງຜົວ, ຖ້າເປັນສິນສົມສ້າງກໍ່ໃຫ້ອອກຊື່ຮ່ວມກັນທັງຜົວ ແລະ ເມຍໃນໃບຕາດິນ.

**ຄຳແນະນຳວ່າດ້ວຍ ການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ ສະບັບເລກທີ 0500/ກຊສ, ລົງວັນທີ 14 ກຸມພາ 2022 (ໝວດທີ 2, ຂໍ້ 2.2.2)**

**ການພິມຊື່ເຈົ້າຂອງສິດນຳໃຊ້ທີ່ດິນຕາມແມ່ນປະຕິບັດຕາມແຕ່ລະກໍລະນີດັ່ງນີ້:**

1. ຖ້າເປັນຊັບເດີມແມ່ນໃຫ້ພິມຊື່ ແລະ ນາມສະກຸນຂອງຜົວ ຫຼື ເມຍ ຫຼື ບຸກຄົນທີ່ເປັນເຈົ້າຂອງສິດນຳໃຊ້ທີ່ດິນ;
2. ຖ້າເປັນສິນສົມສ້າງ ແມ່ນໃຫ້ພິມທັງຊື່ຜົວ ແລະ ຊື່ເມຍໃສ່.

**(ຂໍ້ຕົກລົງ ວ່າດ້ວຍການກຳນົດເນື້ອໃນແບບພິມ ແລະ ການພິມຕາມແບບພິມ ໃບທະບຽນທີ່ດິນ ແລະ ໃບຕາດິນ ເລກທີ 0672/ກຊສ, ລົງວັນທີ 19 ກຸມພາ 2021, ມາດຕາ 7 ຂໍ້ 4)**

ຄພດກ DALaM · Village Focus International www.villagefocus.org · ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນ LIFE · ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG · Brot für die Welt · ສະຫະພາບ ເອີຣົບ European Union